

# ການຂະຫຍາຍ Apple Health

*ກຳລັງຂະຫຍາຍການຄຸ້ມຄອງສຸຂະພາບສຳລັບຜູ້ອົບພະຍົບໃນລັດວໍຊິງຕັນ, ເພາະສຸຂະພາບຂອງທ່ານສຳຄັນ*

ການຄຸ້ມຄອງ Washington Apple Health ກຳລັງຂະຫຍາຍສູ່ຜູ້ໃຫຍ່ທີ່ມີອາຍຸ 19 ປີຂຶ້ນໄປ ທີ່ມີສະຖານະການອົບພະຍົບໃດໜຶ່ງ. ໂຄງການໃໝ່ນີ້ແມ່ນເອີ້ນວ່າ ການຂະຫຍາຍ Apple Health.

## ການບໍລິການທີ່ຢູ່ໃນການຄຸ້ມຄອງ

**ການແພດ**

- ການເຂົ້າພົບຜູ້ໃຫ້ບໍລິການ
- ການບໍລິການໂຮງໝໍ
- ສະຖານພະຍາບານສຳລັບການດູແລບຳບັດ ແລະ ຊຳນານ

**ທັນຕະກຳ**

- ການບໍລິການປ້ອງກັນ, ການກວດ ແລະ ຂະບວນການບົ່ງມະຕິ
- ການຟື້ນຟູ (ສານເຕີມເຕັມ), ໂຣກປາຣິທັນ (ພະຍາດເຫງືອກ), ທັນຕະກຳຮາກແຂ້ວ (ຄອງຮາກແຂ້ວ ແລະ ແຂ້ວປອມ
- ການຜ່າຕັດໃນຜົ້ງປາກ

**ສຸຂະພາບພຶດຕິກຳ**

- ການບໍລິການປິ່ນປົວພາວະຜິດປົກກະຕິຈາກການໃຊ້ສານເສບຕິດ
- ການປິ່ນປົວສຸຂະພາບຈິດ

**ຮ້ານຂາຍຢາ**

- ຢາທີ່ຊື້ຂາຍທົ່ວໄປ ແລະ ຕາມໃບສັ່ງແພດໃນລາຍການຢາທີ່ຕ້ອງການຂອງ Apple Health

**ການບໍລິການທີ່ສະເພາະສຳລັບຄົນໜຸ່ມສາວທີ່ມີອາຍຸ 19 ຫາ 20 ປີ**

- ການກວດສະຫວັດດີພາບ
- ຣາດແວສາຍຕາ
- ການດູແລຈັດກະດູກ
- ທັນຕະກຳຈັດແຂ້ວ

## ການບໍລິການແມ່ນບໍ່ມີໃຫ້

ການບໍລິການທີ່ບໍ່ໄດ້ຢູ່ໃນການຄຸ້ມຄອງລວມເຖິງ ແຕ່ບໍ່ຈຳກັດພຽງ:

- ການກວດຄັດກອງເປັນໄລຍະໃນຊ່ວງທຳອິດ, ການບົ່ງມະຕິ ແລະ ການປິ່ນປົວ (EPSDT)
- ການດູແລຕິດຕາມເພື່ອຊ່ວຍເຫຼືອ
- ການພະຍາບານທີ່ດູແລສະເພາະບຸກຄົນ
- ການດູແລໃນສະຖານບໍລິການພະຍາບານໄລຍະຍາວ
- ໂຄງການ Health Home
- ສະຖານບໍລິການດູແລສຸຂະພາບໃນທັນທີ

Washington Apple Health

Washington State Health Care Authority

HCA 19-0110 LA (3/25) Laotian

## ຜູ້ໃດມີສິດ?

ການລົງທະບຽນໃນການຂະຫຍາຍ Apple Health ແມ່ນຂຶ້ນກັບພື້ນທີ່ໂຄງການທີ່ມີໃຫ້. ຮຽນຮູ້ເພີ່ມເຕີມທີ່ **hca.wa.gov/ahe-enrollment**.

ທ່ານອາດມີສິດສຳລັບການຂະຫຍາຍ Apple Health ຖ້າທ່ານ:

- ເປັນຜູ້ຢູ່ອາໄສໃນລັດວໍຊິງຕັນທີ່ມີອາຍຸ 19 ປີຂຶ້ນໄປ,
- ມີລາຍໄດ້ໃນລະດັບ ຫຼື ຕ່ຳກວ່າຂີດຈຳກັດທີ່ສະແດງ,
- ບໍ່ເຂົ້າເກນເງື່ອນໄຂສຳລັບໂຄງການ Apple Health (Medicaid) ອື່ນໆ ອີງໃສ່ສະຖານະການອົບພະຍົບ,
    - o ຜູ້ອົບພະຍົບທີ່ບໍ່ຮອດໄລຍະລໍຖ້າຫ້າປີ ເພື່ອມີສິດສຳລັບ Apple Health ແມ່ນບໍ່ມີສິດສຳລັບການຂະຫຍາຍ Apple Health.
- ບໍ່ຖືພາ ຫຼື ບໍ່ມີພາວະຖືພາທີ່ສິ້ນສຸດໃນ 12 ເດືອນກ່ອນໜ້າ ແລະ
- ບໍ່ມີສິດສຳລັບໂຄງການສຸຂະພາບທີ່ມີຄຸນສົມບັດ ພ້ອມກັບເຄຣດິດເບ້ຍອາກອນລ່ວງໜ້າ ຫຼື ໂຄງການຊ່ວຍເຫຼືອທາງການແພດທີ່ສະໜອງທຶນໃຫ້ໂດຍລັດຖະບານກາງ.

## ມາດຕະຖານລາຍໄດ້

| ຂະໜາດຄົວເຮືອນ | 1 | 2 | 3 | 4 | 5 |
|---|---|---|---|---|---|
| ລາຍໄດ້ປະຈຳເດືອນ | $1,800 | $2,433 | $3,065 | $3,697 | $4,330 |
| **ຂະໜາດຄົວເຮືອນ** | **6** | **7** | **8** | **9** | **10** |
| ລາຍໄດ້ປະຈຳເດືອນ | $4,962 | $5,595 | $6,228 | $6,860 | $7,492 |

*ອີງໃສ່ມາດຕະຖານຂອງເດືອນເມສາ 2025. ມາດຕະຖານອາດມີການປ່ຽນແປງໃນແຕ່ລະປີ.

### ວິທີພການສະໝັກ

ຖ້າທ່ານມີອາຍຸ 19 ຫາ 64 ປີ:

- **ອອນລາຍ: ໄປທີ່ wahealthplanfinder.org**
- **ໂທລະສັບ:** ໂທຫາສູນບໍລິການລູກຄ້າຂອງ Washington Healthplanfinder ທີ່ 1-855-923-4633

ຖ້າທ່ານມີອາຍຸ 65 ປີຂຶ້ນໄປ:

- **ອອນລາຍ:** ໄປທີ່ **washingtonconnection.org**
- **ໂທລະສັບ:** ຮ້ອງຂໍການສະໝັກໂດຍໂທໄປຫາ 1-877-501-2233

### ຮຽນຮູ້ເພີ່ມເຕີມ

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການຂະຫຍາຍ Apple Health ແລະ ວິທີການສະໝັກໃນຮູບແບບອື່ນໆ, ໃຫ້ເຂົ້າເບິ່ງ **hca.wa.gov/apple-health-expansion**.

### ການຄຸ້ມຄອງ Apple Health ອື່ນໆ

ລູກຄ້າອາດສາມາດຮັບການຄຸ້ມຄອງ Apple Health ປະເພດອື່ນໆ.

ເບິ່ງເກນເງື່ອນໄຂສິດສຳລັບ:

- ເດັກ: **hca.wa.gov/apple-health-children**
- ບຸກຄົນຖືພາ: **hca.wa.gov/apple-health-pregnant individuals**
- ການຄຸ້ມຄອງຫຼັງຈາກການຖືພາ: **hca.wa.gov/apc**
- **Apple Health ສຳລັບຜູ້ບໍ່ແມ່ນພົນລະເມືອງ: hca.wa.gov/apple-health-non-citizens**

